# ສະພາບ ແລະ ບັນຫາໃນການປະຕິບັດໜ້າທີ່ການສອນຂອງຄູ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ

*ເພັດສະຫວັນ ອານຸວົງ*, ສີຖານ ສຸຂະວົງ, ວັນມະນີ ວັນນະສີ, ສຸກາສັນ ໄຊຍະວົງ ແລະ ຈັນທະລາ ຊາພັກດີ*

*ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ*

---

## ບົດຄັດຫຍໍ້

ການຄົ້ນຄວ້າຄັ້ງນີ້ ມີຈຸດປະສົງເພື່ອ 1) ສຶກສາສະພາບການປະຕິບັດໜ້າທີ່ການສອນຂອງຄູ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ແລະ 2) ເພື່ອສຶກສາບັນຫາຕໍ່ການປະຕິບັດສະພາບການປະຕິບັດໜ້າທີ່ການສອນຂອງຄູ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ. ການຄົ້ນຄວ້າຄັ້ງນີ້ ເປັນການຄົ້ນຄວ້າແບບສຳຫຼວດ ທີ່ມີກຸ່ມຕົວຢ່າງ ຈຳນວນ 86 ຄົນ. ເຄື່ອງມືທີ່ໃຊ້ໃນການຮວບຮວມຂໍ້ມູນໃນຄັ້ງນີ້ເປັນແບບສອບຖາມ, ໃຊ້ໂປຣແກຣມຄອມພິວເຕີສຳເລັດຮູບ SPSS V.24 ໃນການວິເຄາະ. ຜົນການຄົນຄວ້າພົບວ່າ: ສະພາບການປະຕິບັດໜ້າທີ່ຂອງຄູໃນຄະນະສຶກສາສາດມະຫາວິທະຍາໄລແຫງຊາດ ໄດ້ປະຕິບັດຫຼາຍມີຄ່າສະເລ່ຍ 4.25 ແລະ ມີຄ່າຜັນປ່ຽນມາດຕະຖານ S.D=0.45. ບັນຫາການປະຕິບັດໜ້າທີ່ຂອງຄູໃນຄະນະສຶກສາສາດມະຫາວິທະຍາໄລແຫງຊາດ ແມ່ນເລື່ອງງົບປະມານ ແລະ ການສະໜັບສະໜູນໜ້າທີ່ຂອງຄູຍັງມີໜ້ອຍ, ຄູສອນມີຫຼາຍໜ້າທີ່ປະຕິບັດພ້ອມກັນ ແລະ ປະຕິບັດການສອນຫຼາຍກວ່າຊົ່ວໂມງສອນທີກຳນົດ, ນັກສຶກສາໃນຄະນະສຶກສາສາດມະຫາວິທະຍາໄລແຫງຊາດ ມີຄວາມແຕກຕ່າງກັນຫຼາຍທາງດ້ານຄວາມຄິດ ແລະ ຄວາມຮູ້, ແລະ ຄູສອນບາງສາຂາວິຊາບໍ່ຈົບວິຊາສະເພາະ.

***ຄຳສັບສຳຄັນ:*** *ສະພາບການປະຕິບັດໜ້າທີ່ການສອນ, ບັນຫາໃນການປະຕິບັດໜ້າທີ່ການສອນ*

---

**ຕິດຕໍ່ພົວພັນ: ເພັດສະຫວັນ ອານຸວົງ; ໂທ: 02029807707; ອີເມວ: p.anuovong@nuol.edu.la*

*Journal of Science and Teacher Education (JLSTE), 1*(1), 232-239

# The Status and Issues in Teachers' Teaching Performance at the Faculty of Education, National University of Laos

*Phetsavanh ANOUVONG*, Sithan SOUKHAVONG, Vanmany VANNASY, Souksanh SAYAVONG and Chanthala XHAPHAKDY*

*Faculty of Education, National University of Laos*

## Abstract

This research aims to examine the status related to teachers' teaching performance at the Faculty of Education, National University of Laos, and to identify the issues associated with these duties. This study is a survey-based research project with a sample group of 86 teachers. The data collection tool used in this study was a questionnaire, and the data was analyzed using SPSS version 24. Through data analysis the study found that the overall state of teaching performance duties at the Faculty of Education, National University of Laos, had highly practiced with an average score of 4.25 and a standard deviation of 0.45. However, there were some challenges related to limited budget and insufficient support for teachers' roles; teachers handling multiple tasks simultaneously and teaching beyond their designated hours; significant differences in students' thinking abilities and knowledge levels and some teachers not having academic qualifications aligned with the subjects they teach.

***Key words:*** *state of teaching duties, Problems in the performance of teaching duties*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ.*

ເປັນທີ່ຍອມຮັບກັນແລ້ວວ່າ ການສຶກສາເປັນສິ່ງທີ່ສຳຄັນຫຼາຍ ໃນການພັດທະນາປະເທດຊາດ ບໍ່ວ່າຈະເປັນ ການພັດທະນາທາງດ້ານເສດຖະກິດ, ການເມືອງ, ສັງຄົມ ແລະ ວັດທະນະທຳ. ເນື່ອງຈາກວ່າ ການພັດທະນາ ດ້ານຕ່າງໆ ນັ້ນມັນຕ້ອງອາໄສພົນລະ ເມືອງ ທີ່ມີຄຸນະພາບ ແລະ ປະສິດທິພາບ ທີ່ເປັນປັດໃຈທີ່ສຳຄັນ. ການສົ່ງເສີມ ຊັບພະຍາກອນມະນຸດ ທີ່ມີຄຸນະພາບ ແລະ ປະສິດທິພາບນັ້ນ ສາມາດປະຕິບັດໄດ້ດ້ວຍການສຶກສາ, ເພາະການສຶກ ສາ ສາມາດພັດທະນາຊັບພະຍາກອນມະນຸດໄດ້ດີທີ່ສຸດ ດັ່ງປັດສະຍາ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ທີ່ກ່າວໄວ້ວ່າ: ຄູສ້າງຄົນ ຄົນສ້າງຊາດ ສຶກສາສາດສ້າງຄູ. ຄະນະສຶກສາສາດ ຖືເອົາການສຶກສາເປັນເຄື່ອງມືທີ່ສຳຄັນ ໃນການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນະພາບ ໂດຍເຊື່ອວ່າ ຊັບພະຍາກອນມະນຸດຈະມີຄຸນະພາບ ກໍ່ຕໍ່ເມື່ອ ໄດ້ຮັບການສຶກສາທີ່ມີຄຸນະພາບ ແລະ ການສຶກສາຈະມີຄຸນນະພາບກໍຕໍ່ເມື່ອສະຖາບັນມີຄຸນນະພາບ (ຄະນະສຶກສາສາດ, 2020).

ການສຶກສາ ຈະສາມາດສ້າງປະໂຫຍດແກ່ສັງຄົມ ໄດ້ຫຼາຍໜ້ອຍພຽງໃດນັ້ນ ມັນຂຶ້ນກັບອົງປະກອບຕ່າງໆ ຂອງການສຶກສາ ແລະ ອົງປະກອບໜຶ່ງທີ່ສຳຄັນຂອງການສຶກສາ ກໍ່ຄື ຄູຜູ້ສອນເອງ ເນື່ອງຈາກຄູຜູ້ສອນ ເປັນຜູ້ ຮັບຜິດຊອບໃນການຈັດການຮຽນ-ການສອນໂດຍກົງ, ເປັນຜູ້ໃກ້ສິດກັບຜູ້ຮຽນ, ເປັນຜູ້ຖ່າຍທອດຄວາມຮູ້, ຄວາມ ສາມາດ, ຄວາມນຶກຄິດຕ່າງໆ ໃຫ້ແກ່ຜູ້ຮຽນ (ກະຊວງສຶກສາທິການ ແລະ ກິລາ, 2016). ການປ່ຽນແປງທາງການ ສຶກສາ ໃນແຕ່ລະດ້ານ ເຊັ່ນ: ການປ່ຽນແປງລາຍວິຊາຮຽນ, ການປ່ຽນແປງຫຼັກສູດ ຈະສາມາດບັນລຸ ຕາມເປົ້າໝາຍ ໄດ້ນັ້ນ ຄູຈະຕ້ອງໄດ້ຮັບການພັດທະນາກ່ອນ, ໂດຍສະເພາະຄູໃນສະຖາບັນສ້າງຄູ ເພາະເປັນຄູ ຜູ້ທີ່ສອນນັກສຶກສາຄູ. ເມື່ອຄູໃນສະຖາບັນສ້າງຄູມີຄຸນນະພາບ ນັກສຶກສາຄູທີ່ຈົບອອກໄປກໍມີຄຸນນະພາບນັ້ນກໍ່ໝາຍເຖິງ ຜົນຜະລິດ ທີ່ມີ ຄຸນນະພາບນັ້ນເອງ. ດັ່ງນັ້ນ, ສະຖາບັນສ້າງຄູ ຈຶ່ງເປັນ ເຄື່ອງມືທີ່ສຳຄັນໃນການພັດທະນາປະເທດ, ການປັບປຸງ ສະຖາບັນການສຶກສາໃຫ້ມີຄຸນນະພາບ ແລະ ໄດ້ມາດຖານ ແລະ ຕອບສະໜອງກັບຄວາມຕ້ອງການຂອງສັງຄົມ.

ປັດຈຸບັນ ສປປ ລາວ ມີ ສະຖາບັນສ້າງຄູ ຈຳນວນ 14 ແຫ່ງ ທີ່ປະຕິບັດໜ້າທີ່ກໍ່ສ້າງ ແລະ ບຳລຸງຄູ ຕາມແຜນພັດທະນາການສຶກສາ ໃນແຕ່ລະໄລຍະ ຕາມການມອບໝາຍ ຂອງກະຊວງສຶກສາທິການ ແລະ ກິລາ ເວົ້າລວມ ເວົ້າສະເພາະກໍ່ຄື ກົມສ້າງຄູ (ກະຊວງສຶກສາທິການ ແລະ ກິລາ, 2012). ໜຶ່ງໃນນັ້ນປະກອບມີ ຄະນະສຶດສາດ ມະຫາວິທະຍາໄລ ແຫ່ງຊາດ. ຄະນະສຶດສາດ ມະຫາວິທະຍາໄລແຫ່ງຊາດ ເປັນສະຖາບັນທີ່ມີການກໍ່ສ້າງຄູ ມາຕັ້ງແຕ່ ເປັນມະຫາ ວິທະຍາໄລສ້າງຄູວຽງຈັນ, ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ເປັນສະຖາບັນບັນການສຶກສາ ມີພາລະ ກິດ ປະຕິບັດພາລະກິດຕາມການມອບໝາຍ ຂອງມະຫາວິທະຍາໄລແຫ່ງຊາດ ກໍ່ຄື ກະຊວງສຶກສາທິການ ແລະ

ກິລາ. ໂດຍສະເພາະແມ່ນ ການມອບໝາຍໃຫ້ສ້າງຄູສອນສໍາລັບຊັ້ນມັດທະຍົມສຶກສາ ຈໍານວນ 12 ສາຂາວິຊາ ຈຶ່ງຈັດໄດ້ວ່າຄະນະສຶດສາສາດ ເປັນສະຖາບັນສ້າງຄູທີ່ໃຫຍ່ທີ່ສຸດ ໃນ ສປປ ລາວ (ຄະນະສຶກສາສາດ, 2020). ດັ່ງນັ້ນ, ການສຶກສາສະພາບການປະຕິບັດໜ້າທີ່ ທີ່ກ່ຽວຂ້ອງກັບການສອນຂອງຄູ ຈຶ່ງຄວນເລີ່ມຈາກສະຖາບັນ ນີ້ກ່ອນ.

ການກໍ່ສ້າງຄູ ນອກຈາກຈະສະໜອງຄວາມຕ້ອງການທາງດ້ານປະລິມານແລ້ວ ສິ່ງທີ່ສໍາຄັນແມ່ນ ການກໍ່ສ້າງ ຄູທີ່ມີຄຸນະພາບ ແລະ ມີປະສິດທິຜົນ, ໃນໄລຍະຜ່ານມາ ຄະນະສຶກສາສາດ ໄດ້ມີການພັດນະນາຄູຜູ້ສອນໃນ ຫຼາຍໆ ດ້ານ ເປັນຕົ້ນແມ່ນດ້ານວິຊາການ ໂດຍສະເພາະ ດ້ານການສອນ, ດ້ານການຄົ້ນຄວ້າວິທະຍາສາດ ແລະ ອື່ນໆ. ແຕ່ ການພັດທະນາເຫຼົ່ານັ້ນຈະສໍາເລັດໄປໄດ້ນັ້ນ ຄູຜູ້ສອນຕ້ອງຮູ້ບົດບາດໜ້າທີ່ຂອງຕົນໃຫ້ລະອຽດກ່ອນ ເພາະເປັນຜູ້ທີ່ ຮັບນະໂຍບາຍ ແລະ ແຜນມາປະຕິບັດ, ການມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບນະໂຍບາຍ ແລະ ແຜນການ ມາປະຕິບັດ, ລວມທັງການມີຄວາມເຂົ້າໃນບົດບາດໜ້າທີ່ຂອງຄູນັ້ນມັນຈຶ່ງເປັນສິ່ງຈໍາເປັນ ແລະ ຖືໄດ້ວ່າ ໜ້າທີ່ຫຼັກ ຂອງຄະນະສຶກສາສາດ ກໍ່ຄື ໜ້າທີ່ຂອງຄູແຕ່ລະຄົນນັ້ນເອງ.

ຈາກບົດລາຍງານການປະເມີນ ຂອງພະແນກວິຊາການ (2019) ໃຫ້ຮູ້ວ່າ ການປະຕິບັດວຽກງານ ບາງຢ່າງ ຍັງບໍ່ທັນ ເປັນໄປຕາມລະບົບ ເຊັ່ນ: ການສະຫຼຸບຄະແນນ, ຈັດຄ່າລະດັບ ແລະ ສິ່ງໃຫ້ພາກວິຊາ ແລະ ຄະນະວິຊາ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ. ຄະແນນປະເມີນຜົນການສຶກສາບາງວິຊາ ຍັງຕໍ່າ ແລະ ບໍ່ແຕກຕ່າງກັນຫຼາຍ. ນັກສຶກສາ ຈໍານວນໜຶ່ງ ຍົກລະດັບບາງລາຍວິຊາ ສິ່ງເຫຼົ່ານີ້ສະແດງໃຫ້ເຫັນ ວ່າຄູສອນຈໍານວນໜຶ່ງ ຍັງບໍ່ທັນປະຕິບັດບົດບາດ ການສອນ ຂອງຕົນເອງໄດ້ດີ ນັ້ນເອງ (ພະແນກວິຊາການ, 2019).

ທັງນີ້ ໃນປີ 2010 ກົມສ້າງຄູ ໄດ້ກໍານົດ ມາດຕະຖານຄູ ເພື່ອເປັນແນວທາງໃນການປະຕິບັດໜ້າທີ່ ການ ສອນ ຂອງຄູໃຫ້ມີປະສິດທິຜົນ ແລະ ມີຄຸນນະພາບສູງ. ໂດຍມາດຕະຖານຄູປະກອບມີ 29 ຄຸນລັກສະນະ ແລະ ມີ 136 ຕົວຊີ້ບອກ ແລະ ໃນປີ 2016 ກົມຈັດຕັ້ງ ແລະ ພະນັກງານ ໄດ້ກໍານົດ ມາດຕະຖານຂອງການປະເມີນ ການ ປະຕິບັດໜ້າທີ່ວຽກງານລັດທະກອນຄູ ເພື່ອເປັນການ ກະນົດນະໂຍບາຍ, ຫຼັກການ, ລະບຽບການ, ວິທີການ ກໍ່ສ້າງ ຄູ-ບໍາລຸງຄູ, ນໍາໃຊ້ ແລະ ຄຸ້ມຄອງຄູ ອອກ ແລະ ໄດ້ແນະນໍາວິທີການ ດໍາເນີນການປະເມີນ ການປະຕິບັດໜ້າທີ່ ຂອງລັດຖະກອນຄູ ໃຫ້ໄດ້ ປະເມີນປີລະ 1 ຄັ້ງ ເພື່ອ ຍ້ອງຍໍ, ເລື່ອນຊັ້ນ-ຂັ້ນ ຫຼື ຍຸດຕິການສິດສອນ ໂດຍ ມີມາດຕະ ຖານ ການປະເມີນຢູ່ 6 ດ້ານ ແລະ ມີ ຕົວຊີ້ບອກໃນການປະເມີນຄູ 17 ຕົວຊີ້ບອກ (ກະຊວງສຶກສາທິການ ແລະ ກິລາ, 2016).

ຈາກຂໍ້ມູນຂ້າງຕົ້ນ ຄະນະຜູ້ຄົ້ນຄວ້າ ເຫັນໄດ້ຄວາມສໍາຄັນຂອງການປະຕິບັດໜ້າທີ່ການສອນຂອງຄູ ແລະ ອີກຢ່າງໜຶ່ງ ຈາກການສຶກສາເອກະສານໃນໄລຍາຜ່ານມາ ຍັງບໍ່ທັນມີບົດຄົ້ນຄວ້າໃດຄົ້ນຄວ້າໃນກ່ຽວກັບ ສະພາບ ແລະ ບັນຫາ ການປະຕິບັດໜ້າທີ່ການສອນຂອງຄູ ດັ່ງນັ້ນ,ຄະນະຜູ້ຄົ້ນຄວ້າຈຶ່ງ ມີຄວາມສົນໃຈ ທີ່ຈະສຶກສາ ຄວາມຄິດເຫັນຂອງຄູ ຕໍ່ສະພາບ ແລະ ບັນຫາ ການປະຕິບັດໜ້າທີ່ການສອນ ຂອງຄູຜູ້ສອນ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ. ເພື່ອເປັນການຮັບປະກັນຄຸນນະພາບ ຂອງການປະຕິບັດໜ້າທີ່ຂອງຄູ ໃຫ້ມີປະສິດທິຜົນ ແລະ ມີຄຸນນະພາບສູງ.

*1.2. ຄໍາຖາມຂອງການຄົ້ນຄ້ວາ*

1) ສະພາບການປະຕິບັດໜ້າທີ່ການສອນຂອງຄູ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ຢູ່ໃນລະດັບໃດ?

2) ບັນຫາການປະຕິບັດໜ້າທີ່ການສອນຂອງຄູ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ມີຫຍັງແດ່?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1) ເພື່ອສຶກສາ ສະພາບການປະຕິບັດໜ້າທີ່ການສອນຂອງຄູ ໃນຄະນະສຶກສາສາດ ມະຫາວິທະ ຍາໄລແຫ່ງຊາດ.

2) ເພື່ອສຶກສາ ບັນຫາການປະຕິບັດໜ້າທີ່ການສອນຂອງຄູ ໃນຄະນະສຶກສາສາດ ມະຫາວິທະ ຍາໄລແຫ່ງຊາດ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ຊື່ນລົດີ ບຸດຕະຂຽວ (2550) ໄດ້ຄົ້ນຄວ້າເລື່ອງ ສຶກສາບົດບາດທີ່ປະຕິບັດຈິງ ແລະ ບົດບາດທີ່ຄາດຫວັງ ຂອງຄະນະອະນຸກໍາມະການ ລັດຖະກອນຄູ ແລະ ບຸກຄະລາກອນທາງການສຶກສາ ຕາມຄວາມຄິດເຫັນ ຂອງລັດ ຖະກອນຄູ ແລະ ບຸກຄະລາກອນທາງການສຶກສາ ສັງກັດສໍານັກງານເຂດພື້ນທີ່ທາງການສຶກສາແຂວງນະຄອນ ລາດສະສີມມາ. ຜົນການຄົ້ນຄວ້າພົບວ່າ: 1) ບົດບາດທີ່ປະຕິບັດຈິງ ແລະ ບົດບາດທີ່ຄາດຫວັງ ຂອງບຸກຄະລາກອນ ທາງການສຶກສາ ສັງກັດສໍານັກງານເຂດພື້ນທີ່ທາງການສຶກສາ ແຂວງນະຄອນລາດຊະສີມາ ໂດຍພາບລວມ ມີການ ປະຕິບັດໃນລະດັບປານກາງ ແລະ ບົດບາດທີ່ຄາດຫວັງ ມີຄວາມຄາດຫວັງຢູ່ໃນລະດັບສູງ. 2) ຄວາມຕ້ອງການ ໃນ ການປະຕິບັດ ຕາມບົດບາດໜ້າທີ່ ຂອງບຸກຄະລາກອນທາງການສຶກສາ ສັງກັດສໍານັກງານເຂດພື້ນທີ່ ທາງການ ສຶກສາ ແຂວງນະຄອນລາດສະສີມມາ ໃນທັດສະນະຂອງລັດຖະກອນຄູ ແລະ ບຸກຄະລາກອນທາງການສຶກສາ ທີ່ຕ້ອງການ ເປັນອັນດັບທໍາອິດ ພິຈາລະນາໄດ້ທາງການບັນຈຸ ແລະ ແຕ່ງຕັ້ງຂ້າລັດສະການຄູ ແລະບຸກຄະລາກອນທາງການສຶກສາ ມີຄວາມເໝາະສົມ ແລະ ກົງຕາມຄວາມຮູ້ຄວາມ

ສາມາດດ້ວຍຄວາມຊື່ສັດ. 3) ບັນຫາ ແລະ ຂໍ້ສະ ເໜີແນະ ໃນການສົ່ງເສີມ ການປະຕິບັດງານຕາມບົດບາດໜ້າທີ່ຈິງ ຂອງຄະນະບຸກຄະລາກອນທາງການສຶກສາ ສັງກັດສໍານັກງານເຂດພື້ນທີ່ທາງການສຶກສາປະຕິບັດໜ້າທີ່ ບໍ່ສອດຄ້ອງກັບໜ້າທີ່ໄດ້ຮັບການປະຕິບັດ ບໍ່ເທົ່າທຽມ ກັນ. ມີອໍານາດໜ້າທີ່ບໍ່ສອດຄ້ອງກັບສະພາບຄວາມເປັນຈິງ ໃຊ້ອໍານາດເພື່ອຜົນປະໂຫຍດໂດຍໃຊ້ລະບົບອຸປະຖໍາ ເຮັດໃຫ້ຂາດຄວາມເປັນອິດສະຫຼະ. ແນວທາງໃນການສົ່ງເສີມໃນການປະຕິບັດໜ້າທີ່ ຄວນມີອົບຮົມທາງດ້ານ ກົດໝາຍ ຫຼື ລະບຽບການທີ່ກ່ຽວຂ້ອງ.

ວິໂລດ ປ່ຽນທະນູວົງ (2546) ໄດ້ຄົ້ນຄວ້າເລື່ອງ ຄວາມສໍາພັນລະຫວ່າງ ບົດບາດຂອງຜູ້ບໍລິຫານ ກັບ ການຈັດການຂະບວນການຮຽນການສອນຂອງຄູ ໃນໂຮງຮຽນແກນນໍາປະຕິຮູບການຮຽນຮູ້ ສັງກັດສະນັກງານ ນະຄອນປະຖົມສຶກສາ ແຂວງສະມຸດສາຄອນ. ຜົນການຄົ້ນຄວ້າພົບວ່າ: 1) ບົດບາດຂອງຜູ້ບໍລິຫານໃນໂຮງຮຽນ ແກນນໍາປະຕິຮູບການຮຽນຮູ້ ສັງກັດສະນັກງານນະຄອນປະຖົມສຶກສາ ແຂວງສະມຸດສາຄອນ ໂດຍລວມ ຢູ່ລະດັບ ຫຼາຍ. 2) ຈັດການຂະບວນການຮຽນການສອນຂອງຄູ ໃນໂຮງຮຽນແກນນໍາປະຕິຮູບການຮຽນຮູ້ ສັງກັດສະນັກງານ ນະຄອນປະຖົມສຶກສາ ແຂວງສະມຸດສາຄອນ ໂດຍລວມຢູ່ລະດັບຫຼາຍ. 3) ຄວາມສາພັນລະຫວ່າງ ບົດບາດ ຂອງຜູ້ບໍລິຫານ ກັບ ການຈັດການຂະບວນການຮຽນການສອນຂອງຄູ ໃນໂຮງຮຽນແກນນໍາປະຕິຮູບການຮຽນຮູ້ ສັງກັດສະນັກງານນະຄອນປະຖົມສຶກສາ ແຂວງສະມຸດສາຄອນ ໃນພາບລວມ ມີຄວາມສໍາພັນ ໂດຍມີລະດັບ ຄວາມເຊື່ອໝັ້ນ 0.01.

ພອນພິພັນ ຊື່ສັດ (2013) ໄດ້ຄົ້ນຄວ້າເລື່ອງ ແນວທາງພັດທະນາຄຸນະພາບການປະຕິບັດງານຄູ ການສຶກສານອກໂຮງຮຽນ ໃນເມືອງ ໃນເຂດພາກຕາເວັນອອກ ຂອງປະເທດໄທ. ຜົນການຄົ້ນຄວ້າພົບວ່າ: ໃນພາບລວມຂອງສະພາບການປະຕິບັດວຽກ ແລະ ຄວາມຄາດຫວັງ ຢູ່ໃນລະດັບສູງ ເມື່ອພິຈາລະນາຊ່ອງວ່າງຂອງລະດັບບັນຫາ ພົບວ່າ ດ້ານການໃຫ້ບໍລິການຮຽນຮູ້ ມີບັນຫາຫຼາຍທີ່ສຸດ ຮອງລົງມາແມ່ນດ້ານ ການສະໜັບສະໜູນກິດຈະກໍາ ຊຸມຊົນ ແລະ ສັງຄົມ ວັດທະນະທໍາ, ປະເພນີ ດ້ານການສ້າງເຄືອຂ່າຍການຮຽນຮູ້, ດ້ານການວາງແຜນການຕະຫຼອດຊີວິດຕາມລໍາດັບ. ແນວທາງການພັດທະນາຄຸນນະພາບການປະຕິບັດວຽກຂອງຄູ ການສຶກສານອກໂຮງຮຽນ ໃນພາກຕະເວັນອອກຂອງປະເທດໄທ ປະກອບດ້ວຍ ດ້ານແຜນການວາງແຜນຕະຫຼອດຊີວິດ ເຊັ່ນ: ກໍານົດຈຸດປະສົງ, ປະສານຂໍ້ມູນ, ຈັດຝຶກອົບຮົມການຮຽນຮູ້ຕະລອດຊີວິດ. ດ້ານກິດຈະກໍາການຮຽນຮູ້ ເຊັ່ນ: ການຈັດຝຶກອົບຮົມຫຼັກສູດ, ການຈັດອົບຮົບວິທີການ ແລະ ທັກສະໃໝ່ໆ, ຝຶກອົບຮົມຄູແກນນໍາ. ດ້ານການບໍລິການການຮຽນຮູ້ ເຊັ່ນ: ກໍານົດສື່ທີ່ຈໍາເປັນ, ຈັດອົບຮົມດ້ານຄອມພິວເຕີ, ຈັດຕັ້ງ ໂຮງຮຽນຕົ້ນແບບ. ດ້ານສະໜັບສະໜູນຊຸມຊົນ ເຊັ່ນ: ການປັບກິດຈະກໍາການຮຽນຮູ້, ສຶກສາພູມປັນຍາ, ຈັດຕັ້ງຜະລິດຕະພັນທ້ອງຖິ່ນ. ດ້ານການສ້າງເຄືອຂ່າຍ ເຊັ່ນ: ຈັດກອງປະຊຸມຝຶກອົບຮົມ, ຈັດສໍາມະນາແລກປ່ຽນບົດຮຽນ ແລະ ໂຄງການພີ່ນ້ອງສອນນ້ອງສໍາລັບຄູລຸ້ນໃໝ່.

## 3. ວິທີດໍາເນີນການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ ເປັນການຄົ້ນຄວ້າແບບສໍາຫຼວດຄວາມຄິດເຫັນ ຕໍ່ ສະພາບ ແລະ ບັນຫາ ການປະຕິບັດ ໜ້າທີ່ການສອນຂອງຄູ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນ ທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ໄດ້ແກ່ ຄູຜູ້ສອນ ໃນຄະນະສຶກສາສາດ ມະຫາວິທະຍາໄລ ແຫ່ງຊາດ ສົກ 2020-2021 ຈານວນ 110 ຄົນ.

ໂດຍອີງໃສ່ຕາຕະລາງ Krejcie & Morgan (1970) ທີ່ ກໍານົດ, ຈໍານວນປະຊາ ກອນ 110 ຄົນ ເລືອກໄດ້ ກຸ່ມຕົວຢ່າງ 86 ຄົນ. ສະນັ້ນ, ຜູ້ຄົ້ນຄວ້າ ຈຶ່ງກໍານົດກຸ່ມຕົວຢ່າງ ທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ໄດ້ແກ່ ຄູສອນ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ສົກຮຽນ 2021-2022 ຈໍານວນ 86 ຄົນ. ໂດຍການເລືອກແບບ ສຸ່ມຕົວຢ່າງ.

*3.2 ຂອບເຂດຂອງການຄົ້ນຄວ້າ*

1) ຂອບເຂດດ້ານເນື້ອໃນ ເປັນການສຶກສາຄວາມຄິດເຫັນຂອງຄູ ກ່ຽວກັບ ສະພາບ ແລະ ບັນຫາ ການປະຕິບັດ ໜ້າທີ່ການສອນ ຂອງຄູ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ຕໍ່ 6 ໜ້າທີ່ ຄື (1) ການວາງແຜນການສອນ ແລະ ການແຕ່ງບົດສອນ, (2) ການສ້າງ ແລະ ນໍາໃຊ້ສື່ການຮຽນ-ການສອນ, (3) ການສິດສອນຕົວຈິງ, (4) ການສຶກສາອົບຮົມຜູ້ຮຽນ, (5) ການວັດ ແລະ ປະເມີນຜົນການຮຽນຂອງຜູ້ຮຽນ ແລະ (6) ການພັດທະນາຕົນເອງ ແລະ ການພົວພັນຕ່າງໆ.

2) ຂອບເຂດດ້ານສະຖານທີ ເປັນການຄົ້ນຄວ້າ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.

3) ຂອບເຂດດ້ານເວລາ

<table>
<tr><th rowspan="2">ລ/ດ</th><th rowspan="2">ເນື້ອໃນ</th><th colspan="3">2019</th><th colspan="6">2020</th></tr>
<tr><th>10</th><th>11</th><th>12</th><th>01</th><th>02</th><th>03</th><th>04</th><th>05</th><th>06</th></tr>
</table>

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 1 | ສຶກສາເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ | | | | | | | | | |
| 2 | ຂຽນບົດສະເໜີບົດໂຄງການຄົ້ນຄວ້າວິທະຍາສາດ | | | | | | | | | |
| 3 | ອອກແບບເຄື່ອງມື ແລະ ປັບປຸງເຄື່ອງມື | | | | | | | | | |
| 4 | ເກັບຂໍ້ມູນ | | | | | | | | | |
| 5 | ເຂົ້າຂໍ້ມູນ ແລະ ວິເຄາະຂໍ້ມູນ | | | | | | | | | |
| 6 | ຂຽນລາຍງານບົດໂຄງການຄົ້ນຄວ້າວິທະຍາສາດ | | | | | | | | | |
| 7 | ຈັດພິມບົດໂຄງການຄົ້ນຄວ້າວິທະຍາສາດ | | | | | | | | | |
| 8 | ເຜີຍແຜ່ບົດໂຄງການຄົ້ນຄວ້າວິທະຍາສາດ | | | | | | | | | |

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືທີ່ໃຊ້ໃນການຮວບຮວມຂໍ້ມູນໃນຄັ້ງນີ້ເປັນແບບສອບຖາມ ແບ່ງອອກເປັນ 3 ຕອນຄື:

ຕອນທີ 1: ຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ ເຊິ່ງຖາມກ່ຽວກັບສະຖານະພາບ ຂອງຜູ້ຕອບແບບສອບຖາມ ກ່ຽວກັບ: ສາຂາວິຊາທີ່ສອນ, ປະສົບການສອນ ແລະ ຈຳນວນຊົ່ວໂມງສອນ ແລະ ໜ້າທີ່ການສອນເປັນລັກສະນະກວດສອບລາຍການ (Checklist).

ຕອນທີ 2: ຂໍ້ມູນກ່ຽວກັບຄວາມຄິດເຫັນຂອງ ຄູສອນຕໍ່ກັບສະພາບການປະຕິບັດໜ້າທີ່ການສອນ ຂອງຄູ ໃນ 6 ດ້ານຄື: (1) ການວາງແຜນການສອນ ແລະ ການແຕ່ງບົດສອນ ຈຳນວນ 07 ຄຳຖາມ, (2) ການສ້າງ ແລະ ນຳໃຊ້ສື່ການຮຽນ-ການສອນ ຈຳນວນ 07 ຄຳຖາມ, (3) ການສິດສອນຕົວຈິງ ຈຳນວນ 08 ຄຳຖາມ, (4) ການສຶກສາອົບຮົມຜູ້ຮຽນ ຈຳນວນ 09 ຄຳຖາມ, (5) ການວັດ ແລະ ປະເມີນຜົນການຮຽນຂອງຜູ້ຮຽນ ຈຳນວນ 09 ຄຳຖາມ, (6) ການພັດທະນາຕົນເອງ ແລະ ການພົວພັນຕ່າງໆ ຈຳນວນ 06 ຄຳຖາມ. ເຊິ່ງແຕ່ລະຄຳຖາມ ເປັນແບບສອບຖາມແບບ Likert Scale ທີ່ມີ 5 ລະດັບ.

ຕອນທີ 3: ຂໍ້ມູນກ່ຽວບັນຫາໃນການປະຕິບັດຂອງຄູສອນ ເປັນຄຳຖາມປາຍເປີດ.

*3.3 ວິທີເກັບກຳຂໍ້ມູນ*

ໃນການຄົ້ນຄວ້ານີ້ ທີມຜູ້ຄົ້ນຄວ້າໄດ້ ດຳເນີນການເກັບກຳຂໍ້ມູນ ຕາມຂັ້ນຕອນດັ່ງນີ້:

ຂັ້ນຕອນທີ 1: ຂໍຄຳເຫັນຈາກຄະນະບໍດີ ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ ເພື່ອລົງເກັບ ກຳຂໍ້ມູນ.

ຂັ້ນຕອນທີ 2: ລົງເກັບກາຂໍ້ມູນຈາກ 6 ພາກວິຊາ ແລະ 6 ພະແນກ ໂດຍການຢາຍແບບ ສອບຖາມໃຫ້ກັບ ຜູ້ຊ່ວຍອຽກໃນແຕ່ລະພາກສ່ວນ ເພື່ອຢາຍຕໍ່ແບບສອບຖາມໃຫ້ກຸ່ມເປົ້າໝາຍພ້ອມທັງ ເກັບຄືນ ເມື່ອສຳເລັດການຕອບແບບສອບຖາມ.

ຂັ້ນຕອນທີ 3: ຄະນະຜູ້ຄົ້ນຄວ້າລົງໄປເກັບຂໍ້ມູນຈາກຜູ້ຊ່ວຍອຽກໃນແຕ່ລະພາກສ່ວນ ເພື່ອນຳມາ ກວດສອບ ແລະ ວິເຄາະ ໃນຂັ້ນຕໍ່ໄປ.

*3.4 ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ*

1) ການວິເຄາະຂໍ້ມູນ

- ການວິເຄາະຄັ້ງນີ້ ໂດຍໃຊ້ໂປຣແກຣມຄອມພິວເຕີສຳເລັດຮູບ ເຊິ່ງມີການດຳເນີນຕາມຂັ້ນຕອນ ຄື: ຫຼັງຈາກການກວດສອບຄວາມສົມບູນຂອງແບບສອບຖາມເປັນທີ່ຮຽບຮ້ອຍແລ້ວ ຈຶ່ງນຳຂໍ້ມູນທີ່ໄດ້ມາຈັດລະຫັດຕົວເລກ (Code) ແລ້ວບັນທຶກລະຫັດລົງໃນຄອມພິວເຕີ ແລະ ດຳເນີນການ ວິເຄາະຂໍ້ມູນ ຕາມສະຖິຕິ ທີ່ໄດ້ກຳນົດໄວ້ ດັ່ງນີ້:

- ວິເຄາະຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ ໂດຍນຳມາຫາຄ່າຄວາມຖີ່ (Frequency) ແລະ ສ່ວນຮ້ອຍ (Percentage).

- ວິເຄາະຂໍ້ມູນກ່ຽວຄວາມຄິດເຫັນ ຂອງຄູສອນຕໍ່ກັບການປະຕິບັດໜ້າທີ່ ການສອນຂອງຄູ ໂດຍນຳມາ ຫາ ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ. ຂໍ້ມູນທີ່ໄດ້ຈາກຜົນການວິເຄາະ, ຜູ້ຄົ້ນຄວ້າໄດ້ນຳມາ ຈັດເຂົ້າ ໃນຕາຕະລາງ ແລະ ຕີຄວາມໝາຍຕາມເກນທີ່ໄດ້ກຳນົດໄວ້ (Perapon, 2552) ຄື:

4.21-5.00 ໝາຍເຖິງ ໄດ້ປະຕິບັດຫຼາຍສຸດ

3,41-4,20 ໝາຍເຖິງ ໄດ້ປະຕິບັດຫຼາຍ

2.61-3.40 ໝາຍເຖິງ ໄດ້ປະຕິບັດປານກາງ

1.81-2.60 ໝາຍເຖິງ ໄດ້ປະຕິບັດໜ້ອຍ

0.00-1.80 ໝາຍເຖິງ ໄດ້ປະຕິບັດໜ້ອຍສຸດ

- ວິເຄາະຂໍ້ມູນກ່ຽວກັບບັນຫາໃນການປະຕິບັດຂອງຄູສອນ ໂດຍການຈັດກຸ່ມຄຳຕອບ ເປັນໝວດໝູ່ ເພື່ອໃຊ້ເປັນຂໍ້ມູນປັບປຸງສະພາບການປະຕິບັດໜ້າທີ່ການສອນຂອງຄູໃຫ້ດີຂຶ້ນ.

2) ສະຖິຕິທີ່ໃຊ້ໃນການຄົ້ນຄວ້າ

- ການຄິດໄລ່ຊອກຫາເປີເຊັນ

$$P = \frac{f}{n} \times 100$$

ເຊິ່ງ: $P$ : ແມ່ນເປີເຊັນ (%)

$f$ : ແມ່ນຄວາມຖີ່ທີ່ຕ້ອງການຄິດໄລ່ເປັນເປີເຊັນ.

$n$ : ແມ່ນຈຳນວນຕົວຢ່າງທັງໝົດ.

- ການຄິດໄລ່ຊອກຫາຄ່າສະເລ່ຍ

$$\overline{X} = \frac{\sum f_i x_i}{n}$$

ເຊິ່ງ: $\overline{X}$ : ແມ່ນຄ່າສະເລ່ຍ

$f_i$ : ແມ່ນຄວາມຖີ່ຂອງນັກຮຽນ

$x_i$ : ແມ່ນຄ່າກາງຂອງອັນດັບຄະແນນ

$n$ : ແມ່ນຈຳນວນນັກຮຽນໃນກຸ່ມຕົວຢ່າງ

- ຄ່າຜັນປ່ຽນມາດຖານ

$$S.D = \sqrt{\frac{\sum f_i \left(x_i - \overline{X}\right)}{n}}$$

ເຊິ່ງ: $S.D$ : ແມ່ນຄ່າຜັນປ່ຽນມາດຖານ

$f_i$ : ແມ່ນຄວາມຖີ່ຂອງນັກຮຽນ

$x_i$ : ແມ່ນຄ່າກາງຂອງອັນດັບຄະແນນ

$\overline{X}$ : ແມ່ນຄ່າສະເລ່ຍຄະແນນ

$n$ : ແມ່ນຈຳນວນນັກຮຽນໃນກຸ່ມຕົວຢ່າງ

## 4. ຜົນການຄົ້ນຄວ້າ

ຈາກການວິເຄາະຜົນຕາມວັດຖຸປະສົງຂອງການຄົ້ນຄ້ວາ ປະກົດດັ່ງນີ້

*4.1 ຜົນການວິເຄາະຂໍ້ມູນພື້ນຖານຂອງກຸ່ມຕົວຢ່າງ*

ຜົນການວິເຄາະຂໍ້ມູນພື້ນຖານຂອງກຸ່ມຕົວຢ່າງ ພົບວ່າ

ດ້ານປະສົບການ ຄູສອນສ່ວນຫຼາຍມີປະສົບການສອນ 10 ຂຶ້ນໄປ ມີຈຳນວນ 64 ຄົນ ເທົ່າກັບ 77.40%.

ດ້ານຈຳນວນຊົ່ວໂມງສອນ ພົບວ່າ ຄູສອນສ່ວນຫຼາຍ ມີຈຳນວນຊົ່ວໂມງສອນ ໜ້ອຍກວ່າ 10 ຊົ່ວໂມງຕໍ່ອາທິດ ເຊິ່ງ ມີຈຳນວນ 48 ຄົນ ເທົ່າກັບ 55.80%.

ດ້ານໜ້າທີ່ປັດຈຸບັນ ພົບວ່າ ຄູສອນ ສ່ວນຫຼາຍ ມີໜ້າທີ່ເປັນວິຊາການທົ່ວໄປ ມີຈຳນວນ 47 ຄົນ ເທົ່າກັບ 54.70%.

*4.2 ຜົນການວິເຄາະສະພາບການປະຕິບັດການສອນຂອງຄູ*

**ຕາຕະລາງທີ 2:** ຜົນການວິເຄາະສະພາບການປະຕິບັດການສອນຂອງຄູໂດຍລວມ

| ລ/ດ | ລາຍການ | ລະດັບການປະຕິບັດ | | ແປຜົນ |
|---|---|---|---|---|
| | | $\overline{X}$ | S.D | |
| I. | ການວາງແຜນການສອນ ແລະ ການແຕ່ງບົດສອນ | 4.34 | 0.50 | ຫຼາຍສຸດ |
| II. | ການສ້າງ ແລະ ນຳໃຊ້ສື່ການຮຽນ-ການສອນ | 4.10 | 0.60 | ຫຼາຍ |
| III. | ການສິດສອນຕົວຈິງ | 4.25 | 0.53 | ຫຼາຍສຸດ |
| IV. | ການສຶກສາອົບຮົມຜູ້ຮຽນ | 4.49 | 0.50 | ຫຼາຍສຸດ |
| V. | ການວັດ ແລະ ປະເມີນຜົນການຮຽນຂອງຜູ້ຮຽນ | 4.30 | 0.51 | ຫຼາຍສຸດ |
| VI. | ການພັດທະນາຕົນເອງ ແລະ ການພົວພັນຕ່າງໆ | 4.05 | 0.52 | ຫຼາຍ |
| | ***ລວມ*** | ***4.25*** | ***0.45*** | ***ຫຼາຍສຸດ*** |

ຈາກຕາຕະລາງທີ 2 ພົບວ່າ ໂດຍລວມສະພາບການປະຕິບັດໜ້າທີ່ການສອນ ແມ່ນຢູ່ໃນລະດັບ ໄດ້ປະຕິບັດຫຼາຍສຸດ ໂດຍມີຄ່າສະເລ່ຍເທົ່າກັບ 4.25 ແລະ ມີຄ່າຜັນປ່ຽນມາດຕະຖານ S.D=0.45. ເມື່ອພິຈາລະນາໃນແຕ່ລະດ້ານ ເຫັນວ່າ ສະພາບການປະຕິບັດໜ້າທີ່ການສອນ ທີ່ໄດ້ມີການປະຕິບັດຫຼາຍກວ່າໝູ່ ແມ່ນດ້ານບົດບາດດ້ານການສຶກສາ ອົບຮົມຜູ້ຮຽນ ມີຄ່າສະເລ່ຍ 4.49 ແລະ ມີຄ່າຜັນປ່ຽນມາດຕະຖານ S.D=0.50, ຮອງລົງມາ ດ້ານການວາງແຜນການສອນ ແລະ ການແຕ່ງບົດສອນ ມີຄ່າສະເລ່ຍ 4.34 ແລະ ມີຄ່າຜັນປ່ຽນມາດຕະຖານ S.D=0.50 ແລະ ສະພາບການປະຕິບັດໜ້າທີ່ການສອນ ທີໄດ້ມີການປະຕິບັດໜ້ອຍກວ່າໝູ່ ແມ່ນບົດບາດດ້ານການພັດທະນາຕົນເອງ ແລະ ການພົວພັນຕ່າງໆ ມີຄ່າສະເລ່ຍເທົ່າກັບ 4.05 ແລະ ມີຄ່າຜັນປ່ຽນມາດຕະຖານ S.D=0.52.

*4.3 ຜົນການວິເຄາະສະພາບການປະຕິບັດໜ້າທີ່ການ*

ຜົນການວິເຄາະ ຄວາມຄິດເຫັນຂອງຄູ ກ່ຽວກັບບັນຫາ ຕໍ່ການປະຕິບັດໜ້າທີ່ການສອນ ພົບວ່າ:

ຄູສອນ ຈຳນວນຫຼາຍ ໃຫ້ຄຳເຫັນວ່າ ບັນຫາດ້ານງົບປະມານ ແລະ ການສະໜັບສະໜູນໜ້າທີ່ການສອຍຂອງຄູຍັງມີໜ້ອຍ ເຊັ່ນ: ມີຄູສອນ ບາງຄົນເວົ້າວ່າ ງົບປະມານມີຈຳກັດ ໃນການສະໜອງປຶ້ມຕຳລາ ແລະ ອຸປະກອນທີ່ທັນສະໄໝ, ຂາດສຳມະນາ, ການຖອດຖອນ ແລະ ແລກປ່ຽນບົດຮຽນ ຍັງມີໜ້ອຍ,

ເອທີສິ່ງເສີມວິຊາການຍັງຈຳກັດ, ການຈັດການເຝິກອົບຮົມເພີ່ມພູນຄວາມຮູ້ຍັງມີໜ້ອຍ, ການເຝິກອົບຮົມຄວາມຮູ້ດ້ານການອອກແບບ ແລະ ການສ້າງສື່ ຍັງມີໜ້ອຍ, ການເຝິກອົບຮົມຄວາມຮູ້ດ້ານການອອກແບບ ແລະ ການສ້າງສື່ ຍັງມີໜ້ອຍ.

ຖັດມາແມ່ນຄຳເຫັນກ່ຽວກັບ ມີຫຼາຍວຽກປະຕິບັດພ້ອມກັນ ແລະ ສອນຫຼາຍກວ່າ ໂມງສອນ ທີກຳນົດ. ເຊັ່ນມີຄູສອນຫຼາຍຄົນເວົ້າວ່າ ສິດສອນຫຼາຍກວ່າໂມງສອນທີກຳນົດ.

ນອກຈາກນີ້, ຍັງມີຜູ້ໃຫ້ຄຳເຫັນວ່າ ນັກສຶກສາມີຄວາມແຕກຕ່າງກັນຫຼາຍທາງດ້ານຄວາມຄິດ ແລະ ຄວາມຮັບຮູ້. ເຊັ່ນມີຄູສອນ ບາງຄົນເວົ້າວ່າ ນັກສຶກສາຫຼາຍຄົນ ມີຫຼາຍແນວຄິດ ແລະ ມີສະພາບແວດລ້ອມ ທາງສັງຄົມກົດໜ່ວງ, ນັກສຶກສາບາງຄົນຖືເບົາ ບໍ່ຟັງຄວາມ ສົນໃຈແຕ່ເຕັກໂນໂລຊີໃໝ່ໆ. ສຸດທ້າຍແມ່ນຄຳເຫັນກ່ຽວກັບ ຜູ້ສອນບາງສາຂາວິຊາ ບໍ່ຈົບວິຊາສະເພາະ, ເຊັ່ນມີຄູສອນ ບາງຄົນເວົ້າວ່າ ຄູສອນ ສອນບໍ່ກົງກັບວິຊາທີ່ຮຽນຈົບມາ.

## 5. ອະພິປາຍຜົນ

ຈາກຜົນການຄົ້ນຄວ້າເລື່ອງ ບົດບາດຂອງຄູສອນໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ສາມາດ ອະທິບາຍຜົນໄດ້ ດັ່ງນີ້:

ຈາກຜົນການຄົ້ນຄວ້າ ຄວາມຄິດເຫັນ ຕໍ່ ສະພາບການປະຕິບັດໜ້າທີ່ການສອນຂອງຄູ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ທີ່ພົບວ່າ ສະພາບການປະຕິບັດໜ້າທີ່ການສອນຂອງຄູ ໄດ້ປະຕິບັດຢູ່ໃນລະດັບຫຼາຍສຸດ ມີຄ່າສະເລ່ຍເທົ່າກັບ 4.25 ແລະ ມີຄ່າຜັນປ່ຽນມາດຕະຖານ S.D=0.45. ໝາຍຄວາມວ່າ ຄູຜູ້ສອນສ່ວນຫຼາຍ ແມ່ນ ໄດ້ປະຕິບັດໜ້າທີ່ຂອງຕົນເອງໄດ້ດີ ເມື່ອປຽບທຽບກັບຜົນການຄົ້ນຄວ້າ ຂອງຊື່ນລືດີ ບຸດຕະຂຽວ (2550) ໃນເລື່ອງບົດບາດຈິງຂອງບຸກຄະລາກອນທາງການສຶກສາ ສັງກັດສຳນັກງານເຂດພື້ນທີ່ທາງການສຶກສາ ແຂວງນະຄອນລາດຊະສີມາ ທີ່ຢູ່ໃນລະດັບປານກາງ ແມ່ນ ຄູສອນ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ໄດ້ປະຕິບັດໜ້າທີ່ການສອນ ສູງກວ່າ ແລະ ຜົນການຄົ້ນຄວ້າໃນບົດຄົ້ນຄວ້ານີ້ ຍັງສູງກວ່າ ຜົນການຄົ້ນຄວ້າ ດ້ານພາບລວມຂອງສະພາບການປະຕິບັດວຽກ ແລະ ຄວາມຄາດຫວັງ ຂອງ ພອນພິພັນ ຊື່ສັດ (2012) ແລະ ຜົນການຄົ້ນຄວ້າ ດ້ານການຈັດການຂະບວນການຮຽນການສອນຂອງຄູ ໃນໂຮງຮຽນແກນນຳປະຕິຮູບການຮຽນຮູ້ ສັງກັດ ນະຄອນປະຖົມສຶກສາ ແຂວງສະມຸດສາຄອນ ຂອງ ວິໂລດ ປ່ຽນທະນູວົງ (2546) ທີ່ມີຜົນການຄົ້ນຄວ້າ ຢູ່ໃນລະດັບສູງ. ແລະ ເມື່ອນຳຜົນການຄົ້ນຄວ້າ ມາປຽບທຽບກັບມາດຕະຖານການປະເມີນຄູ ຂອງກະຊວງສຶກສາທິການ ແລະ ກິລາ (2016) ແລ້ວ ເຫັນວ່າ ການປະຕິບັດໜ້າທີ່ການສອນຂອງຄູໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ຍັງສາມາດເລື່ອນຊັ້ນຂັ້ນເງິນເດືອນ ໃຫ້ກັບຄູສອນໄດ້ ປີລະຂັ້ນ.

ເຖິງຢ່າງໃດກໍ່ຕາມ ເມື່ອສັງເກດຈາກຜົນການຄົ້ນຄວ້າກ່ຽວກັບບັນຫາ ຕໍ່ການປະຕິບັດໜ້າທີ່ການສອນ ຂອງຄູ ຍັງພົບບັນຫາຫຼາຍໆ ດ້ານ ເຊັ່ນ: (1) ງົບປະມານ ແລະ ການສະໜັບສະໜູນ ໜ້າທີ່ຂອງຄູຍັງມີໜ້ອຍ, (2) ຄູສອນ ມີຫຼາຍໜ້າທີ່ປະຕິບັດພ້ອມກັນ ແລະ ປະຕິບັດການສອນຫຼາຍກວ່າ ຊົ່ວໂມງສອນທີກຳນົດ (3) ນັກສຶກສາ ມີຄວາມແຕກຕ່າງກັນຫຼາຍ ທາງດ້ານຄວາມຄິດ ແລະ ຄວາມຮູ້, (4) ຜູ້ສອນບາງສາຂາວິຊາ ບໍ່ຈົບວິຊາສະເພາະ. ໝາຍຄວາມວ່າ ຄູສອນບາງຄົນທີຫຼາຍໜ້າທີ່ປະຕິບັດເຮັດໃຫ້ວຽກງານບາງວຽກລ່າຊ້າ ແລະ ບໍ່ທັນກັບເວລາທີ່ກຳນົດ ເຊິ່ງສອດຄ້ອງ ກັບບົດລາຍງານ ການປະເມີນຂອງພະແນກວິຊາການ (2019) ທີ່ວ່າ ຄູສອນຈານວນໜຶ່ງ ຍັງບໍ່ທັນປະຕິບັດບົດບາດການສອນ ຂອງຕົນເອງໄດ້ດີ, ການປະຕິບັດວຽກງານ ບາງຢ່າງ ຍັງບໍ່ທັນ ເປັນໄປຕາມລະບົບ.

## 6. ສະຫຼຸບຜົນ

ການຄົ້ນຄວ້າຄັ້ງນີ້ ມີຈຸດປະສົງເພື່ອ 1) ເພື່ອສຶກສາສະພາບການປະຕິບັດໜ້າທີ່ການສອນຂອງຄູ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ແລະ 2) ເພື່ອສຶກສາບັນຫາ ຕໍ່ການປະຕິບັດສະພາບການປະຕິບັດໜ້າທີ່ການສອນຂອງຄູ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ. ການຄົ້ນຄວ້າຄັ້ງນີ້ ເປັນການຄົ້ນຄວ້າແບບສຳຫຼວດ ທີ່ມີກຸ່ມຕົວຢ່າງ ຈຳນວນ 86 ຄົນ. ເຄື່ອງມືທີ່ໃຊ້ໃນການຮອບຮອມຂໍ້ມູນໃນຄັ້ງນີ້ເປັນແບບສອບຖາມ, ໃຊ້ໂປຣແກຣມຄອມພິວເຕີສຳເລັດຮູບ SPSS V.24 ໃນການວິເຄາະຂໍ້ມູນ.

ຜົນການຄົ້ນຄວ້າພົບວ່າ:

1) ສະພາບການປະຕິບັດໜ້າທີຄູສອນ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫງຊາດ ແມ່ນໄດ້ປະຕິບັດ ຢູ່ໃນລະດັບຫຼາຍສຸດ.

2) ບັນຫາການປະຕິບັດໜ້າທີ່ຂອງຄູ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫງຊາດ ແມ່ນ (1) ງົບປະມານ ແລະ ການສະໜັບສະໜູນ ໜ້າທີ່ຂອງຄູຍັງມີໜ້ອຍ, (2) ຄູສອນ ມີຫຼາຍໜ້າທີ່ປະຕິບັດພ້ອມກັນ ແລະ ປະຕິບັດການສອນຫຼາຍກວ່າຊົ່ວໂມງສອນທີກຳນົດ, (3) ນັກສຶກສາ ໃນຄະນະສຶກສາສາດ ມະຫາວິທະຍາໄລແຫງຊາດ ມີຄວາມແຕກຕ່າງກັນຫຼາຍ ທາງດ້ານຄວາມຄິດ ແລະ ຄວາມຮູ້, ແລະ (4) ຜູ້ສອນບາງສາຂາວິຊາ ບໍ່ຈົບວິຊາສະເພາະ.

## 7. ຂໍ້ຈຳກັດ ແລະ ຂໍ້ສະເໜີແນະ

*1) ຂໍ້ຈຳກັດຂອງການຄົ້ນຄ້ວາ*

ຜ່ານການຄົ້ນຄວ້າຄັ້ງນີ້, ຜູ້ຄົ້ນຄວ້າໄດ້ພົບຂໍ້ຈຳກັດດັ່ງນີ້: ເອກະສານບົດຄົ້ນຄວ້າກ່ຽວກັບສະພາບ ແລະ ບັນຫາການປະຕິບັດໜ້າທີ່ການສອນຂອງຄູ ຢູ່ໃນ ສປປ ລາວ ຍັງມີຈຳນວນໜ້ອຍ, ແລະ ການຄົ້ນຄວ້າດ້ານບັນຫາການປະຕິບັດໜ້າທີ່ດ້ານການສອນຂອງຄູ ຍັງສຳລວດໃນພາບລວມຢູ່.

*2) ຂໍ້ສະເໜີແນະໃນການນຳຜົນການຄົ້ນຄ້ວາໄປໃຊ້*

ຈາກຜົນການຄົ້ນຄວ້າ ເພື່ອນຳໄປໃຊ້ ຄວນປະຕິບັດດັ່ງຕໍ່ໄປນີ້:

- ຄະນະຮັບຜິດຊອບ ຄວນຈັດສັນງົບປະມານ ແລະ ການສະໜັບສະໜູນ ເພີ່ມເຕີມ ເພື່ອສົ່ງເສີມ ການປະຕິບັດໜ້າທີ່ຂອງຄູ ແລະ ຄວນມີຈັດຕັ້ງ ແລະ ປະເມີນລັດຖະກອນຄູ ເພື່ອຍ້ອງຍໍ ແລະ ຈັດການເລື່ອນຊັ້ນຂັ້ນເງິນເດືອນໃນແຕ່ລະປີ.
- ຄູຜູ້ສອນ ຄວນຊອກຫາວິທີການພັດທະນາຕົນເອງ ດ້ວຍຮູບການຕ່າງໆ, ຈັດບຸລິມະສິດ ໜ້າວຽກໃຫ້ຊັດເຈນ ແລະ ປະຕິບັດວຽກໄປຕາມລະບົບຂອງອົງກອນ ໃຫ້ສຳເລັດຜົນ ແລະ ທັນກັບເວລາກຳນົດ.

## 8. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2012). *ກົດໝາຍວ່າດ້ວຍການສຶກສາຊັ້ນສູງ.* ນະຄອນຫຼວງວຽງຈັນ: ກົມການສຶກສາຊັ້ນສູງ.

ກະຊວງສຶກສາທິການ ແລະ ກິລາ. (2016). *ຄູມືແນະນຳການປະເມີນຜົນງານການປະຕິບັດວຽກງານ ຂອງລັດຖະກອນຄູ (ສະບັບປັບປຸງ).* ກົມການສຶກສາຊັ້ນສູງ.

ກົມສ້າງຄູ. (2010). *ມາດຕະຖານຂອງຄູ.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ຄະນະສຶກສາສາດ. (2020). *ບົດສະຫຼຸບປະຈຳຊຸດຮຽນ 2016-2020.* ຄະນະສຶກສາສາດ ມະຫາວິທະຍາໄລ ແຫ່ງຊາດ.

ຄະນະສຶກສາສາດ. (2020). *ປື້ມອະນຸສອນ.* ນະຄອນຫຼວງວຽງຈັນ.

ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ. (2020). *ຜົນການຮຽນຂອງນັກສຶກສາ.* ຄະນະສຶກສາສາດ ມະຫາ ວິທະຍາໄລແຫ່ງຊາດ.

ຊື່ນລືດີ ບຸດຕະຂຽວ. (2550). *ສຶກສາບົດບາດທີ່ປະຕິບັດຈິງ ແລະ ບົດບາດທີ່ຄາດຫວັງຂອງຄະນະອະນຸກຳມະການ ລັດຖະກອນຄູ ແລະ ບຸກຄະລາກອນທາງການສຶກສາ ຕາມຄວາມຄິດເຫັນຂອງລັດຖະກອນຄູ ແລະ ບຸກຄະລາກອນທາງການສຶກສາ ສັງກັດສຳນັກງານເຂດພື້ນທີ່ທາງການສຶກສາ ແຂວງນະຄອນ ລາດສະສີມາ.*

ພະແນກວິຊາການ. (2019). *ບົດປະເມີນການສອນ ປະຈຳສົກ 2018-19.* ຄະນະສຶກສາສາດ ມະຫາວິທະຍາໄລ ແຫ່ງຊາດ.

ພະແນກວິຊາການ ຄສສ. (2020). *ບົດລາຍງານການຈັດການຮຽນການສອນ ສົກຮຽນ 2019-2020.* ຄະນະ ສຶກສາສາດ ມະຫາວິທະຍາໄລ ແຫ່ງຊາດ.

ພະແນກວິຊາການ ຄສສ. (2021). *ບົດລາຍງານການຈັດການຮຽນການສອນ ສົກ 2020-2021.* ຄະນະ ສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.

ພອນພິພັນ ຊື່ສັດ. (2013). ແນວທາງພັດທະນາຄຸນະພາບການປະຕິບັດງານຄູ ການສຶກສານອກໂຮງຮຽນ ໃນແຂດຕາເວັນຕົກ. *Veridian E-Journal, Silpakorn University*. Vol.5 No. 3 September - December 2012

ວິໂລດ ປ່ຽນທະນູວົງ. (2546). *ຄວາມສຳພັນລະຫວ່າງ ບົດບາດຂອງຜູ້ບໍລິຫານ ກັບ ການຈັດການ ຂະບວນການຮຽນການສອນຂອງຄູ ໃນໂຮງຮຽນແກນນຳປະຕິຮູບການຮຽນຮູ້ ສັງກັດສະນັກງານ ນະຄອນປະຖົມສຶກສາ ແຂວງສະມຸດສາຄອນ.*

Krejcie, R.V., & Morgan, D.W., (1970). *Determining Sample Size for Research Activities*. Educational and Psychological Measurement.

Perapon. (2552). *Coset coding for the rayleign fading channels.* Chiang mai Graduate School.